**ການບ້ານບົດທີ 6 ພາກຕົ້ນ**

# ຖືກຂັງໄວ້ໃນກາຍຊາເລຍກ່ອນຈະໄປໂລມ

(ກິດຈະການ 23:12 ເຖິງ 26:24)

**1** ໃນບົດນີ້ ຈະຮຽນເລື່ອງທີ່ໂປໂລຖືກຂັງຄຸກ. ຂັງໄວ້ໃນເມືອງກາຍຊາເລຍ ລິມທະເລ ເມດີແຕຣລາເນ. ຂັງໄວ້ດົນປານໃດ? (ກຈກ 24:27) ____________________________

*ເມື່ອໂປໂລເດີນທາງຈະໄປກຸງເຢລູຊາເລັມ ເພິ່ນຂຶ້ນບົກຢູ່ກາຍຊາເລຍຄາວໜຶ່ງແລ້ວເລີຍໄປເຢລູຊາເລັມ ຕອນນີ້ເຫັນວ່າກັບມາເມືອງກາຍຊາເລຍ. ເມື່ອໂປໂລແວ່ເມືອງກາຍຊາເລຍໃນທາງທີ່ຈະໄປກຸງເຢລູ ຊາເລັມ ມີຄົນຊື່ວ່າ ອາຄະໂບທຳນວາຍວ່າ ໂປໂລຈະຖືກມັດໃນກຸງເຢລູຊາເລັມ (ກຈກ 21:10-11) ບໍ່ເຖິງສອງອາທິດເທື່ອ ໂປໂລຖືກຈັບເປັນນັກໂທດໃນເມືອງກາຍຊາເລຍ!*

## ການປອງຮ້າຍຕໍ່ຊີວິດໂປໂລ ເຂົາຈຶ່ງເອົາໂປໂລໄປກາຍຊາເລຍ

(ກຈກ 23:12-35)

**2** ໃຫ້ອ່ານ ກຈກ 23:11-15. ໂປໂລປະເຊີນໜ້າກັບມະຫາປະໂລຫິດອານາເນຍ ແລ້ວໃນຄືນວັນນັ້ນເຫັນພະເຢຊູ ມາບອກວ່າຈົ່ງມີໃຈກ້າ.

ກ. ຕໍ່ໄປມີຄົນຢິວສາບານຕົວຢ່າງໃດ? ______________________________________

ຂ. ມີຈັກຄົນສາບານຢ່າງນັ້ນ? ______________________________________________

**3** ໃຫ້ອ່ານ ກຈກ 23:16-22.

ກ. ແມ່ນຜູ້ໃດໄດ້ຍິນເລື່ອງນີ້? ______________________________________________

ຂ. ໂປໂລບອກໃຫ້ລາຍງານຕໍ່ໃຜ? __________________________________________

ຄ. ນາຍພັນນັ້ນຊື່ຫຍັງ? (ກຈກ 23:26) ___________________________________

**4** ໃຫ້ອ່ານ ກຈກ 23:23-24. ເພື່ອໃຫ້ເຫັນວ່ານາຍພັນໄດ້ກະທຳຕອບຢ່າງໃດ.

ກ. ເພິ່ນສັ່ງໃຫ້ຈັດພົນທະຫານຈັກຄົນ? ______________________________________

ຂ. ທະຫານມ້າຈັກຄົນ? ____________________________________________________

ຄ. ທະຫານຫອກຈັກຄົນ? __________________________________________________

ງ. ຂຽນຈົດໝາຍໄປເຖິງຜູ້ປົກຄອງທີ່ເປັນຊາດໂລມຊື່ຫຍັງ? (ກຈກ 23:26) ___________

**5** ໃຫ້ອ່ານຈົດໝາຍນັ້ນ (ກຈກ 23:26-30). ນາຍພັນກະລາວດີໂອລີເຊຍ ເວົ້າເຖິງສອງປະການທີ່ສຳຄັນໃນຈົດໝາຍສະບັບນັ້ນ.

ກ. ບອກວ່າໂປໂລເປັນສັນຊາດໃດ? (ກຈກ 23:27) ___________________________

ຂ. ເປັນຫຍັງນາຍພັນເຫັນວ່າ ບໍ່ຄວນຂັງໄວ້ແລະຂ້າໃຫ້ຕາຍ? (ກຈກ 23:29) __________

ຄ. ເພາະເຫດນີ້ເຂົາໃສ່ໂທດເບົາ ດັ່ງນັ້ນນາຍຮ້ອຍທີ່ຄຸມໂປໂລໄວ້ບໍ່ຫ້າມຫຍັງ? (ກຈກ 24:23) ______________________________

**6** ໃຫ້ອ່ານ ກຈກ 23:31-35.

ກ. ເຂົາໄປເຖິງເມືອງອັນຕິປາຕິ ແລະທະຫານພວກອື່ນກໍກັບໄປຍັງຄ້າຍ, ມື້ໜ້າມາເຂົາໃຫ້ທະຫານໃດໄປສົ່ງ ໂປໂລຕໍ່? ______________________________

ຂ. ມາເຖິງກາຍຊາເລຍແລ້ວ ພວກທະຫານມ້າມອບໂປໂລໄວ້ໃຫ້ໃຜ? ______________

**7** ຫຼັງຈາກຄຳທຳນວາຍຂອງອາຄະໂບວ່າ ພວກຢິວໃນກຸງເຢລູຊາເລັມຈະມັດໂປໂລໄວ້ ໂປໂລຈາກກາຍຊາເລຍໄປ ກຸງເຢລູຊາເລັມ. ບໍ່ເກີນຈັກວັນ ໂປໂລກັບມາກາຍຊາເລຍໃນສະພາບເປັນນັກໂທດ? (ກຈກ 24:11) ______________________________

ຕໍ່ໄປເຫັນວ່າ ອາລິດຕາໂຂກັບລູກາຢູ່ກາຍຊາເລຍນຳ.

> *ກາຍຊາເລຍເປັນເມືອງງາມຫຼາຍ ຢູ່ລິມທະເລເມດິແຕຣາເນ, ຢູ່ຫ່າງຈາກກຸງເຢລູຊາເລັມ 104 ກິໂລແມັດ ທາງທິດຕາເວັນຕົກສຽງເໜືອ. ເຮໂລດຜູ້ຍິ່ງໃຫຍ່ທີ່ເປັນກະສັດໃນເມື່ອພະເຢຊູເກີດ, ເປັນຜູ້ສ້າງເມືອງນັ້ນ. ເມື່ອໂປໂລອອກເດີນທາງໄປປະກາດຂ່າວປະເສີດເທື່ອທີສາມ ເພິ່ນກັບຂຶ້ນບົກທ່າເຮືອຂອງກາຍຊາເລຍນີ້. (ກຈກ 18:22 ແລະ ກຈກ 21:8). ກາຍຊາເລຍມີພະລາດຊະວັງງາມເລີດ ມີໂຮງລະຄອນໃຫຍ່ທີ່ເຂົາໃຊ້ ເປັນສະໜາມກິລາແລະມີວັດໃຫຍ່ງາມທີ່ເຂົາຂາບໄຫວ້ເຈົ້າຈັກກະພັດໂລມ, ເປັນເມືອງຫຼວງຂອງແຂວງຢູດາ ແລະເປັນທີ່ຢູ່ຂອງທັງຜູ້ປົກຄອງໂລມ ແລະກະສັດເຮໂລດ. ໃຫ້ທ່ານກັບໄປເບິ່ງແຜນທີ່ໜ້າ 85 ເພື່ອໃຫ້ເຫັນແລະຮູ້ສະຖານທີ່ນັ້ນ. (ກາຍຊາເລຍເປັນຊື່ເມືອງ)*

**8** ໃຫ້ເຮົາສະຫລູບເລື່ອງທີ່ເຄີຍເຫັນ ແລະເລື່ອງທີ່ເກີດຂຶ້ນມາໃນເມືອງກາຍຊາເລຍນັ້ນ.

ກ. ປະມານ 20 ປີກ່ອນ, ມີນາຍຮ້ອຍທະຫານໂລມມາຟັງເປໂຕເທດສະໜາແລ້ວມາເຊື່ອ ຄົນນັ້ນຊື່ຫຍັງ? (ກຈກ 10:24) ______________________________

ຂ. ກ່ອນນັ້ນ ເພື່ອນຂອງຊະເຕຟາໂນຜູ້ໜຶ່ງ ໄປປະກາດໃນແຂວງຊະມາເລຍແລະເປັນພະຍານໃຫ້ຊາວ ເອທິໂອເປຍ ແລະນັ່ງລົດຂອງຊາວເອທິໂອເປຍວ່ານພະທຳ (ປະກາດພະທຳ), ລູກສິດຄົນນັ້ນມາປະກາດ ຂ່າວປະເສີດເຖິງເມືອງກາຍຊາເລຍ ເພິ່ນຊື່ຫຍັງ? (ກຈກ 8:40) ______________________________

ຄ. ຕອນທີ່ໂປໂລມາເຖິງກາຍຊາເລຍນີ້ ຟີລິບຍັງຢູ່ ເພາະໂປໂລໄປພັກໃນເຮືອນຂອງເຂົາເວລາຈະເດີນທາງໄປ ເຢລູຊາເລັມ (ກຈກ 21:8). ຟີລິບ ນັ້ນມີລູກສາວຈັກຄົນ ທີ່ປະກາດພະທຳດ້ວຍ? (ກຈກ 21:9) ______________________________

ງ. ເຫັນວ່າ ໂປໂລມີເພື່ອນຫຼາຍຄົນທີ່ຈະໄປຢ້ຽມໄດ້ ເພາະຜູ້ທີ່ຄຸມຕົວໂປໂລໄວ້ບໍ່ຫ້າມຢ່າງໃດ? (ກຈກ 24:23) ______________________________

**9** ໂປໂລມາເຖິງເມືອງກາຍຊາເລຍນີ້ ໃນປະມານປີ ຄ. ສ. 57. ຖ້າໂປໂລເກີດໃນປີ ຄ.ສ. 0 ມາເຖິງປີ ຄ.ສ. 57 ທີ່ເຂົາຈັບໄປກາຍຊາເລຍເປັນນັກໂທດ ເພິ່ນຈະມີອາຍຸ ຈັກປີ? ________

*ພວກຜູ້ປະກາດເຫຼົ່ານັ້ນ ອາດຈະລືມຮັບໃຊ້ພະເຈົ້າໃນຫຼາຍດ້ານໃນຍຸກທີ່ຢູ່ກາຍຊາເລຍນີ້. ເຫັນວ່າເຂົາ ມີໂອກາດປະກາດຂ່າວປະເສີດ ໃຫ້ເຈົ້າໜ້າທີ່ຟັງຢ່າງທີ່ບໍ່ເຄີຍມີມາກ່ອນ.*

## ໂປໂລເປັນພະຍານຕໍ່ພວກເຈົ້າໜ້າທີ່ສູງ

**10** ໂປໂລມີໂອກາດປະກາດຂ່າວປະເສີດຕໍ່ຜູ້ມີອຳນາດໃນກາຍຊາເລຍ 3 ຄົນ ຄື:

ກ. ໃນ ກຈກ 24:24 ກ່າວຕໍ່ໜ້າໃຜ? ________________ ກັບ ________________

(ເຟລິກນັ້ນເປັນຜູ້ປົກຄອງໂລມ.)

ຂ. ໃນ ກຈກ 25:1-6 ກ່າວຕໍ່ໜ້າໃຜ? ____________________________________

ຄ. ໃນ ກຈກ 25:23 ກ່າວຕໍ່ໜ້າໃຜ? ກະສັດ __________ ກັບພະນາງ __________ (ຕື່ມ)

*ຖ້າທ່ານມີໂອກາດໃຫ້ອ່ານຄຳພະຍານຕໍ່ພວກເຂົາໃຫ້ໝົດໃນ ກຈກ 24 ແລະ 25.*

<u>ຜູ້ສຳຄັນທີ່ 1 ເຟລິກ ກັບ ດູຊີລາ (ກຈກ 24:1-27)</u>

*<u>ເຟລິກ</u> ນັ້ນເປັນຄົນທີ່ມີຊື່ສຽງບໍ່ດີທີ່ຕິດສິນບົນ. ເພິ່ນເກີດເປັນຂ້າທາດ ແຕ່ຍ້ອນໂດຍອິດທິພົນຂອງອ້າຍຊື່ງ ຢູ່ໃກ້ສິດກັບເຈົ້າຈັກກະພັດກຼາວດີໂອ. ນັກປະຫວັດສາດໂລມຜູ້ໜຶ່ງບອກວ່າ ເຟລິກນີ້ມີອຳນາດເປັນກະສັດ ແຕ່ຫົວ ຄິດຍັງເປັນຂ້າທາດ. ຫຼັງຈາກເກີດມີຄວາມວຸ້ນວາຍໃຫຍ່ ໃນກາຍຊາເລຍ ເຈົ້າຈັກກະພັດເອົາເພິ່ນກັບຄືນໂລມ (ບໍ່ມີອຳນາດຕໍ່ໄປ). ເລື່ອງນີ້ເກີດຂຶ້ນໃນປີ ຄ.ສ. 59.*

*<u>ດູຊີລາ</u> ເກີດໃນຄອບຄົວເຮໂລດ, ເມື່ອຍັງອາຍຸອ່ອນເຟລິກຊັກຊວນໃຫ້ປະຜົວມາເປັນເມຍທີສາມຂອງເຟລິກ.*

**11** ເຟລິກນັ້ນແຫຼະ, ເປັນຜູ້ພິພາກສາຂ້າໃຊ້ຂອງພະເຈົ້າ ຄື ໂປໂລ. ໂປໂລກ່າວຄຳພະຍານໃຫ້ເຟລິກນັ້ນສອງເທື່ອ ເທື່ອທີໜຶ່ງ ມະຫາປະໂລຫິດເອົາທະນາຍຄວາມມາຟ້ອງໂປໂລຕໍ່ໜ້າເຟລິກ.

ກ. ທະນາຍຄວາມນັ້ນ ຊື່ຫຍັງ? (ກຈກ 24:1-2) ______________________________

ເທື່ອທີສອງ ທັງສອງຜົວເມຍນັ່ງຟັງ.

ຂ. ເມຍນັ້ນຊື່ຫຍັງ? (ກຈກ 24:24) ____________________________________

ຄ. ໂປໂລກ່າວເຖິງຄວາມຍຸດຕິທຳ ການບັງຄັບໃຈ ແລະຫຍັງອີກ? (ກຈກ 24:25)

________________________________________________________________

ງ. ເຟລິກສະດຸ້ງຕົກໃຈຈຶ່ງກ່າວຫຍັງ? __________________________________

ຈ. ໃນເວລານັ້ນເຟລິກຫວັງໃຈວ່າໂປໂລຈະໃຫ້ຫຍັງ? (ກຈກ 24:26) _______________

ສ. ແຕ່ເຟລິກຢູ່ບໍ່ເຖິງເພາະເຈົ້າຈັກກະພັດເອົາເພິ່ນກັບຄືນກຸງໃດ? _________________

**ແລ້ວມີຜູ້ໃໝ່ມາແທນ ຄື:**

<u>ຜູ້ສຳຄັນທີ 2 ເຟຊະໂຕ (ກຈກ 25:1-12)</u>

*<u>ເຟຊະໂຕ</u> ມາເປັນຜູ້ປົກຄອງຕາງໜ້າຈັກກະພັດໂລມ. ຄົນຜູ້ນີ້ມີສິນທຳຢູ່ໜ້ອຍໜຶ່ງ ແຕ່ຍັງຢາກເອົາໃຈ ຄົນຢິວເພື່ອຈະບໍ່ໃຫ້ເກີດມີບັນຫາໃນແຂວງ. ເພິ່ນປົກຄອງແຕ່ສອງປີແລ້ວກໍຕາຍ.*

**12** ເຟລິກຖືກປົດຕຳແໜ່ງແລ້ວ ເຟຊະໂຕຂຶ້ນຕຳແໜ່ງເປັນຜູ້ປົກຄອງແຂວງ. ເຟຊະໂຕຮູ້ດີວ່າໂປໂລບໍ່ຜິດ.

ກ. ແຕ່ເພື່ອຈະເອົາໃຈຄົນຢິວ ເພິ່ນຄິດຈະເອົາໂປໂລໄປຊຳລະຄວາມຢູ່ໃສ? (ກຈກ 25:9) ______________________________________________

ຂ. ໂປໂລຮູ້ດີວ່າ ຖ້າກັບໄປເຢລູຊາເລັມຄົນຢິວຈະຂ້າ. ໂປໂລເລີຍຂໍອຸທອນໄປເຖິງໃຜ? (ກຈກ 25:10-11) ______________________________________________

ຄ. ໂປໂລເປັນພົນລະເມືອງໂລມ ດັ່ງນັ້ນມີສິດອາໄສກົດໝາຍພົນລະເມືອງໂລມ. ເຫັນວ່າໂປໂລຂໍອຸທອນໄປເຖິງ ກາຍຊາ ເຟຊະໂຕຕອບວ່າຢ່າງໃດ? (ກຈກ 25:12) ______________________________________________

ຜູ້ສຳຄັນທີ 3 ອາຄຼິປາ ແລະ ເບນິເກ (ກຈກ 25:13 ເຖິງ 26:32)

*<u>ອາຄຼິປາ</u> ເປັນເຊື້ອກະສັດເຮໂລດ ທີ່ເປັນກະສັດເໜືອແຂວງຢູດາ. ເພິ່ນມີພະລາດຊະວັງໃນເມືອງກາຍ ຊາເລຍດ້ວຍ. ມີນ້ອງສາວສອງຄົນຄື ດູຊິລາ ທີ່ເປັນເມຍຜູ້ປົກຄອງໂລມ (ເຟລິກ) ແລະນ້ອງສາວອີກຜູ້ໜຶ່ງຊື່ວ່າ:*

*<u>ເບນິເກ</u> ທີ່ຢູ່ໃນພະລາດຊະວັງກັບອ້າຍ ທີ່ເປັນເລື່ອງໜ້າອັບອາຍໃນສາຍຕາຂອງປະຊາຊົນ. ຄອບຄົວ ເຮໂລດນັ້ນບໍ່ເປັນຊາດຢິວແທ້ ໆ ແຕ່ເປັນຊາດປະສົມ.*

**13** ກ. ເຟຊະໂຕມີບັນຫາທີ່ແກ້ໄຂບໍ່ຕົກ. ມີນັກໂທດທີ່ຂໍອຸທອນໄປເຖິງສານຂອງຈັກກະພັດໃນກຸງໂລມ ແຕ່ຂາດຫຍັງ? (ກຈກ 25:27) ______________________________

ຂ. ພໍດີໃນເວລານັ້ນ ເຫັນວ່າກະສັດຢິວມາເຖິງກາຍຊາເລຍ ທີ່ອາດຈະຊ່ວຍອະທິບາຍຄຳຟ້ອງຂອງພວກຢິວນັ້ນ. ເຟຊະໂຕຂໍປຶກສາກັບໃຜ? (ກຈກ 25:13-14) ______________

**14** ເມື່ອໂປໂລຈະກ່າວຄຳພະຍານຕໍ່ໜ້າສອງຄົນນັ້ນ ກໍເປີດໂອກາດຢ່າງກວ້າງ. ຜູ້ທີ່ມາຟັງກໍມີຫຼາຍຄົນ. (ກຈກ 25:23).

ກ. ກະສັດໃດ? ______________________________________________

ຂ. ພະນາງໃດ? ______________________________________________

ຄ. ມີທະຫານຊັ້ນໃດ? ______________________________________________

ງ. ຄົນສຳຄັນທັງຫຼາຍໃນບອ່ນໃດ? ______________________________________

ຈ. ຜູ້ປົກຄອງໂລມ ຄື ໃຜ? ______________________________________________

**15** ໂປໂລເຫັນວ່າເປັນໂອກາດດີທີ່ສຸດທີ່ຈະປະກາດຂ່າວປະເສີດ. ໃຫ້ທ່ານອ່ານຄຳພະຍານຂອງໂປໂລໃນ ກຈກ 26:1-23.

ກ. ໂປໂລກ່າວຢ່າງແຈ້ງດີວ່າ ເຄີຍຖືສາສະໜາຢ່າງເຄັ່ງຂັດທີ່ສຸດຕາມພວກໃດ? (ກຈກ 26:5) ______________________________________________

ຂ. ເພິ່ນພະຍາຍາມບັງຄັບພວກຄຼິດສະຕຽນໃຫ້ກ່າວຄຳໝິ່ນປະໝາດຕໍ່ໃຜ? (ກຈກ 26:11) ______________________________________________

ຄ. ແຕ່ມີວັນໜຶ່ງທີ່ເພິ່ນເຫັນພະເຢຊູຕາມທາງທີ່ເດີນໄປດາມາເຊ ຈຶ່ງຫຼີບຕັ້ງໃຈໃໝ່. ຕັ້ງແຕ່ວັນນັ້ນເພິ່ນບໍ່ໄດ້ຂັດ ຂືນຫຍັງ? (ກຈກ 26:19) ______________________________

ງ. ໂປໂລຈຶ່ງຢືນຢູ່ເປັນພະຍານຕໍ່ _________ ແລະຜູ້ນ້ອຍ. (ຕື່ມຄວາມ ຈາກ ກຈກ 26:22)

**16** ໂປໂລຍັງເວົ້າຢູ່ ແຕ່ມີອີກຜູ້ໜຶ່ງຮ້ອງສຽງຍິ່ງດັງຂຶ້ນ. ໃຫ້ອ່ານເລື່ອງນີ້ໃນ ກຈກ 26:24-32.

ກ. ຜູ້ທີ່ຮ້ອງສຽງດັງນັ້ນຄືໃຜ? (ກຈກ 26:24) ______________________________

ຂ. ເພິ່ນວ່າໂປໂລເປັນຢ່າງໃດ? ______________________________________

ຄ. ໂປໂລຕອບວ່າບໍ່ໄດ້ເປັນບ້າ ແຕ່ກ່າວຕາມຫຍັງ? (ກຈກ 26:25) _____________

ງ. ສິ່ງທີ່ໂປໂລປະລິບມານັ້ນ ເປັນສິ່ງທີ່ກະສັດອາຄຼິປາຮູ້ດີແລະເພາະບໍ່ໄດ້ເຮັດໃນບ່ອນຢ່າງໃດ? (ກຈກ 26:26) ______________________________________

**17** ໂປໂລຫັນໜ້າຕໍ່ກະສັດແລ້ວຖາມເພິ່ນໂດຍກົງ.

ກ. ໂປໂລຖາມຜູ້ໃດເລື່ອງຄວາມເຊື່ອໃນຜູ້ປະກາດພະທຳ? (ກຈກ 26:27) ___________

ຂ. ທີ່ຈິງໂປໂລຮູ້ໄວ້ກ່ອນແລ້ວ. ຮູ້ຫຍັງ? __________________________________

ທຸກຄົນຢູ່ໃນຫ້ອງນັ້ນ ກໍຕົກໃຈທີ່ນັກໂທດຈະກ້າຖາມກະສັດຢ່າງນັ້ນ! ກະສັດອາຄຼິປາບໍ່ໄດ້ຕອບ. ຄ້າຍຄືວ່ານັກໂທດກາຍ ເປັນຜູ້ຕັດສິນ ແລະຜູ້ຕັດສິນກາຍເປັນນັກໂທດ!

ຄ. ກະສັດອາຄຼິປາ ເຫັນວ່າໂປໂລຢາກຊັກຊວນໃຫ້ເປັນຫຍັງ? (ກຈກ 26:28) _________

ງ. ໃນທີ່ສຸດກະສັດອາຄຼິປາ ເວົ້າກັບເຟຊະໂຕຢ່າງໃດ? (ກຈກ 26:32) ______________

______________________________________________________________

*ເຖິງວ່າເຂົາບໍ່ໄດ້ປ່ອຍກໍຕາມ ແຕ່ໂປໂລສວຍໂອກາດປະກາດຂ່າວປະເສີດອີກ. ເຖິງວ່າບໍ່ໄດ້ເຫັນກະສັດ ອາຄຼິປາມາເຊື່ອກໍຕາມ ແຕ່ອາດຈະມີບາງຄົນໃນຫ້ອງນັ້ນທີ່ໄດ້ຍິນຄຳກ່າວຂອງໂປໂລທີ່ຍັງຈະເຊື່ອຕໍ່ໄປ.*

**18** ສະຫລູບເລື່ອງ. ໂປໂລປະກາດຂ່າວປະເສີດໃຫ້ຜູ້ທີ່ມີຕໍາແໜ່ງຟັງ ຄື 3 ພວກໃດ? (ໃຫ້ຕື່ມຄວາມທີ່ຂາດ)

1 ____________________ ແລະພັນລະຍາຊື່ ____________

2 ____________________

3 _____________________ແລະນ້ອງສາວຊື່ ____________

**19** ກ. ໃນຄົນເຫຼົ່ານັ້ນ ແມ່ນໃຜເປັນຊາດໂລມ? __________________ ແລະ ____________

ຂ. ຄົນໃດເປັນລູກຊອດຢິວ? ____________________________ ແລະ ____________

*ຈົ່ງຮັບພິຈາລະນາແລະອ້ອນວອນ*

*ທີ່ໂປໂລຖືກຂັງໄວ້ຢ່າງນັ້ນເປັນເວລາສອງປີ ອາດຈະເຮັດໃຫ້ເພິ່ນເສົ້າໃຈ ແຕ່ເພິ່ນບໍ່ໄດ້ເລີກໃນການປະກາດ ຂ່າວປະເສີດ. ເພິ່ນຍິ່ງສວຍໂອກາດປະກາດພະທໍາ. ໂປໂລອາດຈະເປັນຕົວຢ່າງແກ່ພວກເຮົາຢ່າງໃດໃນເວລາເຮົາຜິດຫວັງ!*

(ເສັງ)

ຕອບ:

**1** *ຂັງໄວ້ 2 ປີ.*

**2** *ກ. ຈະບໍ່ກິນບໍ່ດື່ມຈົນກ່ວາຈະໄດ້ຂ້າໂປໂລເສຍ. ຂ. ມີ 40 ຄົນ.*

**3** *ກ. ລູກຊາຍຂອງນ້ອງສາວໂປໂລ. ຂ. ນາຍພັນ. ຄ. ກະລາວດີໂອລີເຊຍ.*

**4** *ກ. 200 ຄົນ. ຂ. 70 ຄົນ. ຄ. 200 ຄົນ. ງ. ເຟລິກ.*

**5** *ກ. ຊາດໂລມ. ຂ. ເພາະບໍ່ມີຂໍ້ຫາວ່າຜິດ.*
*ຄ. ບໍ່ຫ້າມຜູ້ໃດທີ່ເປັນເພື່ອນຂອງໂປໂລເຂົ້າມາ.*

**6** *ກ. ທະຫານມ້າ. ຂ. ໃຫ້ຜູ້ປົກຄອງ (ເຟລິກ).*

**7** *ເປັນນັກໂທດ 12 ວັນ.*

**8** *ກ. ໂກເນລີໂອ. ຂ. ຟີລິບ. ຄ. ມີ 4 ຄົນ.*
*ງ. ບໍ່ຫ້າມຜູ້ທີ່ເປັນເພື່ອນຂອງເພິ່ນທີ່ຢາກເຂົ້າມາ ບົວລະບັດ.*

**9** *ອາຍຸ 57 ປີ.*

**10** *ກ. ເຟລິກກັບພັນລະຍາຊື່ດູຊີລາ. ຂ. ເຟຊະໂຕ. ຄ. ອາគຼີປາ... ເບນີເກ.*

ຕອບ (ຕໍ່):

**11** *ກ. ເຕຕູໂລ. ຂ. ດູຊີລາ. ຄ. ການພິພາກສາທີ່ຈະມາພາຍໜ້າ.*
*ງ. ກ່າວວ່າ "ບັດນີ້ຈົ່ງໄປກ່ອນເທາະ ເມື່ອມີໂອ ກາດເຮົາຈະເອີ້ນທ່ານມາອີກ".*
*ຈ. ເງິນສິນບົນ. ສ. ກຸງໂລມ.*

**12** *ກ. ກຸງເຢລູຊາເລັມ. ຂ. ກາຍຊາ. ຄ. "ເຈົ້າກໍຈະໄດ້ໄປເຝົ້າກາຍຊາ".*

**13** *ກ. ບໍ່ມີຂໍ້ກ່າວຫາ. ຂ. ກະສັດອາຄິຣິປາ.*

**14** *ກ. ອາຄີຣິປາ. ຂ. ເບນີເກ. ຄ. ນາຍພັນ. ງ. ໃນນະຄອນນັ້ນ.*
*ຈ. ເຟຊະໂຕ.*

**15** *ກ. ຟາລິຊາຍ. ຂ. ຕໍ່ພະເຈົ້າ. ຄ. ບໍ່ໄດ້ຂັດຂືນນິມິດຊຶ່ງລົງມາຈາກສະຫວັນ.*
*ງ. ຜູ້ໃຫຍ່.*

**16** *ກ. ເຟຊະໂຕ. ຂ. ເປັນບ້າແລ້ວ. ຄ. ຕາມສັດຈິງ. ງ. ບໍ່ໄດ້ເຮັດໃນບ່ອນລັບລີ້.*

**17** *ກ. ຖາມກະສັດອາຄິຣິປາ. ຂ. ຮູ້ວ່າກະສັດອາຄິຣິປາເຊື່ອຢູ່. ຄ. ຢາກໃຫ້ເປັນຄຣິດສະຕຽນ.*
*ງ. "ຖ້າຜູ້ນີ້ບໍ່ໄດ້ອຸທອນໄປເຖິງກາຍຊາ ຈະປ່ອຍເສັຍກໍໄດ້".*

**18** *1 ເຟລິກ ແລະ ດູຊີລາ.*
*2 ເຟຊະໂຕ.*
*3 ກະສັດອາຄິຣິປາ ແລະ ເບນີເກ.*

**19** *ກ. ເຟລິກ ແລະ ເຟຊະໂຕ.*
*ຂ. ດູຊີລາ, ກະສັດອາຄິຣິປາ ແລະ ເບນີເກ.*

**ການບ້ານບົດທີ 6 ພາກປາຍ**

# ເດີນທາງໄປກຸງໂລມ

(ກິດຈະການ 27:1 ເຖິງ 28:15)

*ໂປໂລຢາກໄປກຸງໂລມຕັ້ງແຕ່ເຫິງແລ້ວ ຕອນນີ້ໄດ້ໄປ ແຕ່ບໍ່ໄປໃນສະພາບເສລີ. ເພິ່ນເປັນນັກໂທດເພື່ອຈະໄປຮັບ ການພິພາກສາຕໍ່ໜ້າເຈົ້າຈັກກະພັດໂລມ ຄື ເນໂລ.*

ການເດີນທາງນີ້ຈະແບ່ງເປັນ 4 ພາກ ຄື:

- ລົງເຮືອໄປເຖິງເກາະກະເລເຕ. (ກຈກ 27:1-12)
- ລົມພະຍຸ-ເຮືອແຕກເສຍ. (ກຈກ 27:13-44)
- ຢູ່ເກາະເມລິເຕ 3 ເດືອນ. (ກຈກ 28:1-10)
- ໄປເຖິງກຸງໂລມ. (ກຈກ 28:11-16)



# ລົງເຮືອໄປເຖິງເກາະກະເລເຕ

(ກິດຈະການ 27:1-12)

**1** ເມື່ອງຈາກໂປໂລຂໍອຸທອນໄປເຖິງກາຍຊາ ເຂົາມອບໂປໂລໄວ້ກັບນາຍຮ້ອຍຄົນໜຶ່ງຊື່ຫຍັງ? (ກຈກ 27:1) ______

ນາຍຮ້ອຍຄົນນັ້ນເປັນຄົນສຸພາບດີທີ່ໃຫ້ກຽດແກ່ໂປໂລ.

**2** ກ. ມີໝູ່ເດີນທາງໄປກັບໂປໂລຊື່ຫຍັງ? (ກຈກ 27:2) ______

ຂ. ເປັນຊາວເມືອງໃດ ແຂວງໃດ? ______

ຄ. ທີ່ຜູ້ລາຍງານຂຽນວ່າ ອາລິດຕາໂຂໄປ "ພ້ອມກັນກັບພວກເຮົາ" ສະແດງວ່າຢ່າງໃດ?

______

| ໃຫ້ທ່ານຂີດເສັ້ນກ້ອງຄໍາວ່າ "ພວກເຮົາ" ໃນ ກິດຈະການ 27:2 ນັ້ນ. |
|---|

**3** ກ. ເມືອງກາຍຊາເລຍ ໝາຍໄວ້ໂດຍຕົວອັກສອນໃດ ໃນແຜນທີ່ໜ້າ 103? ______

ຂ. ເຂົາອອກຈາກເມືອງກາຍຊາເລຍ ແລ້ວມື້ໜ້າມາເຖິງເມືອງໃດ? (ກຈກ 27:3) ______

ຄ. ໝາຍໂດຍອັກສອນໃດ? ______

ງ. ນາຍຮ້ອຍຢູລີໂອ ອະນຸຍາດໃຫ້ເຂົ້າໄປຫາມິດສະຫາຍທີ່ຊ່ວຍໂປໂລຢ່າງໃດ? (ກຈກ 27:3) ______

**4** ກ. ອີກບໍ່ເຫິງເຂົາແລ່ນເຮືອລຽບເກາະທີ່ໂປໂລກັບມາຈາກບາລະນາບາ ປະກາດຂ່າວປະເສີດເທື່ອທໍາອິດທີ່ອອກເດີນ ທາງໄປ ຄື ເກາະໃດ? (ຂໍ້ 4) ______

ຂ. ເກາະນັ້ນໝາຍໄວ້ໂດຍອັກສອນໃດ? ______

ເຂົາແລ່ນເຮືອໄປທາງນັ້ນເພື່ອຫຼີກລົມແຮງທີ່ຂັດຂວາງ. ໂປໂລອາດຈະເຫັນຝັ່ງທະເລແຂວງກີລີເກຍທີ່ເພິ່ນເຄີຍຢູ່ ໃນເມື່ອຍັງເປັນເດັກທີ່ເມືອງຕາໂຊ.

**5** ກ. ຫຼັງຈາກນັ້ນມາເຖິງເມືອງມີລາ ທີ່ໝາຍໂດຍຕົວອັກສອນໃດ? ______

ຂ. ໃນມີລານັ້ນ ນາຍຮ້ອຍພົບເຮືອລໍາໜຶ່ງທີ່ຈະໄປປະເທດໃດ? (ຂໍ້ 6) ______

ຄ. ເຮືອລໍານັ້ນ ກໍຍັງແລ່ນລຽບຝັ່ງມາເຖິງເມືອງກະນີໂດແຂວງອາເຊຍ ທີ່ໝາຍໄວ້ດ້ວຍອັກສອນໃດ? ______

ງ. ອອກຈາກກະນີໂດເຂົາແລ່ນໄປທາງໃຕ້ ຊູ່ເກາະໃດ? (ຂໍ້ 7) ______

ຈ. ໝາຍໂດຍຕົວອັກສອນໃດ? ______

*<u>ໝາຍເຫດ</u>: ຕໍ່ໄປຈະເຫັນວ່າຕິໂຕໄປປະກາດໃນເກາະກະເລເຕນີ້. ໂປໂລຂຽນຈົດໝາຍໄປເຖິງເກາະນີ້.*

**6** ກ. ເຂົາແລ່ນເຮືອລຽບເກາະນັ້ນ ດ້ວຍຄວາມຍາກລໍາບາກຈຶ່ງມາເຖິງບ່ອນໃດ? (ຂໍ້ 8) ______

ຂ. ໝາຍໃນແຜນທີ່ດ້ວຍຕົວອັກສອນໃດ? ______

ຄ. ເປັນຫຍັງເຂົາບໍ່ຢາກຈອດຜ່ານລະດູໜາວຢູ່ທີ່ທ່າງາມນັ້ນ? (ຂໍ້ 12) _______________

ງ. ຄົນສ່ວນຫຼາຍເຫັນດີໃຫ້ອອກໄປ ເພາະຢາກໄປເຖິງອີກເມືອງໜຶ່ງທີ່ເໝາະກ່ວາ, ມີແຕ່ຄົນດຽວທີ່ບໍ່ເຫັນດີໃຫ້ໄປ ຄືໃຜ? (ຂໍ້ 9-10) __________________________________

ຈ. ຍາມເທດສະການໃດຜ່ານໄປແລ້ວ? ____________________________________

ສ. ໂປໂລເຫັນວ່າການເດີນທາງໃກ້ລະດູໜາວຢ່າງນັ້ນຈະເປັນຢ່າງໃດ? (ຂໍ້ 10) ________
ແຕ່ຄົນສ່ວນຫຼາຍບໍ່ເຫັນພ້ອມກັບໂປໂລ. ເຂົາເລີຍແລ່ນເຮືອອອກຈາກທ່າງາມນັ້ນໄປ.

## ລົມພະຍຸ-ເຮືອແຕກເສຍ

(ກິດຈະການ 27:13-44)

**7** ກ. ເຂົາເດີນທາງໄປບໍ່ເຖິງ ເຮືອຖືກລົມພະຍຸກ້າພັດມາຈາກທິດໃດ?
(ຂໍ້ 14 ໃຫ້ເບິ່ງຂໍ້ອ້າງຂ້າງລຸ່ມ) ________________________________________

ຂ. ເຂົາຕ້ອງປ່ອຍເຮືອໄປຢ່າງໃດ? (ຂໍ້ 15) __________________________________

ຄ. ຫຼາຍວັນເຂົາບໍ່ເຫັນແສງໃດ? (ຂໍ້ 20) ____________________________________

ງ. ຄວາມຫວັງໝົດໄປ. ໂປໂລບອກເຂົາວ່າ ບໍ່ຄວນອອກຈາກເກາະໃດ? (ຂໍ້ 21) ________

ຈ. ໃນກາງຄືນມີໃຜມາຢືນຢູ່ໃກ້ໂປໂລ? (ຂໍ້ 23) ________________________________
ເຖິງເຮືອຈະແຕກເສຍກໍຕາມ ແຕ່ຄົນຢູ່ໃນເຮືອຈະບໍ່ຕາຍ.

**8** ກ. ເຂົາຖືກພັດໄປພັດມາໃນທະເລຈັກຄືນ? (ຂໍ້ 27) ______________________________

ຂ. ແມ່ນພວກໃດພະຍາຍາມໜີອອກຈາກເຮືອ? (ຂໍ້ 30) ___________________________

ຄ. ໂປໂລກ່າວຄຳເຕືອນໃຫ້ໃຜ? (ຂໍ້ 31) _________________ ແລະ ______________

ງ. ພວກທະຫານຈຶ່ງຕັດຫຍັງ? (ຂໍ້ 32) __________________________________________
ຈຶ່ງຈະບໍ່ມີໃຜໜີປະໄດ້.

**9** ກ. ໂປໂລເປັນຫ່ວງເຂົາເພາະເຂົາບໍ່ໄດ້ກິນມາຈັກວັນ? (ຂໍ້ 33) ____________________

ຂ. ໃກ້ຈະຮຸ່ງແຈ້ງໂປໂລບອກໃຫ້ເຂົາກິນເພື່ອຫຍັງ? (ຂໍ້ 34) _____________________

ຄ. ໂປໂລຈຶ່ງຢິບເອົາຫຍັງ? (ຂໍ້ 35) ___________________________________________

ງ. ຂອບພະຄຸນໃຜກ່ອນຈະກິນ? ________________________________________________
ແລ້ວທຸກຄົນກໍມີກຳລັງ!

**10** ມາເຖິງນີ້ເຫັນວ່າໂປໂລກາຍເປັນນາຍເຂົາແລ້ວ. ຜູ້ໃດກໍເຫັນວ່າອຳນາດຂອງພະເຈົ້າຢູ່ນຳໂປໂລ.

ກ. ເຮືອມາຄຸງດິນຢ່າງໃດ? (ຂໍ້ 41) ___________________________________________

ຂ. ຫົວເຮືອຕິດແໜ້ນຈົນອອກບໍ່ໄດ້ ທ້າຍເຮືອກໍແຕກອອກ. ແມ່ນພວກໃດປຶກສາກັນ? (ຂໍ້ 42)

ຄ. ເຂົາຈະຂ້າໃຜ? _________________________________________________________

*ແຕ່ນາຍຮ້ອຍຫ້າມ. ປົກກະຕິຖ້ານັກໂທດລົບໜີທະຫານຍາມນັກໂທດຈະຕ້ອງຖືກໂທດແທນເຂົາ. ດັ່ງນັ້ນ ເຂົາຈະຂ້ານັກໂທດເພື່ອບໍ່ໃຫ້ໜີໄປ. ແຕ່ນາຍຮ້ອຍນັ້ນນັບຖືໂປໂລຈົນກວ່າບໍ່ຍອມຂ້າເຂົາ. ຜົນສຸດທ້າຍເຂົາ ລອດຕາຍທຸກຄົນ.*

ໆ. ເກາະທີ່ເຂົາຂຶ້ນຢູ່ນັ້ນຄືເກາະໃດ? (ກຈກ 28:1) ____________________________

| ໂປໂລເປັນຕົວຢ່າງທີ່ດີ |
|---|
| ໂປໂລຄິດເຖິງຟ້າສະຫວັນ ແລະອາດຈະຄິດເຖິງວັນເວລາທີ່ຈະລັບຕາລາໂລກໄປຢູ່ກັບພະເຢຊູ ແຕ່ໃນ ຍຸກທີ່ຍັງມີຊີວິດຢູ່ໃນໂລກນີ້ ໂປໂລເຮັດວຽກຢ່າງໝັ້ນຄົງແທ້ ໆ ທັງມີປັນຍາອີກດ້ວຍ:<br>(1) ມີແຕ່ໂປໂລຜູ້ດຽວທີ່ຮູ້ວ່າບໍ່ຄວນແລ່ນເຮືອໃນເວລາຈະເຂົ້າລະດູໜາວ.<br>(2) ເພາະໂປໂລຢູ່ໃກ້ສິດກັບພະເຈົ້າ ຈົນກະທັ້ງພະເຈົ້າເປີດເຜີຍໃຫ້ຮູ້ວ່າຈະບໍ່ມີຄົນເສຍຊີວິດ.<br>(3) ທີ່ໂປໂລຮູ້ວ່າລູກເຮືອຈະພະຍາຍາມໜີອອກຈາກເຮືອ. ທັງເຕືອນນາຍຮ້ອຍທະຫານ ໃຫ້ຫ້າມບໍ່ໃຫ້ລູກເຮືອໜີໄປ.<br>(4) ໂປໂລເຫັນວ່າເຂົາຈຳເປັນຕ້ອງກິນເຂົ້າຈຶ່ງຈະມີແຮງເພື່ອຮັກສາຊີວິດ.<br>(5) ມີແຕ່ໂປໂລທີ່ບໍ່ໜ້າອາຍຂອບພະຄຸນພະເຈົ້າຕໍ່ໜ້າພວກທະຫານແລະລູກເຮືອ ກ່ອນຈະກິນ. |

**11** ມີບາງຄົນທີ່ຫາຄວາມວ່າ ຄຼິດສະຕຽນບໍ່ມີປະໂຫຍດໃນການປະຕິບັດຊີວິດປະຈຳວັນ. ຖ້າມີຄົນນອກຄົນໃດມາຕິວ່າ ຄວາມ ຄິດຂອງຄຼິດສະຕຽນບໍ່ມີປະໂຫຍດໃນຊີວິດປະຈຳວັນ ທ່ານຈະຍົກຕົວຢ່າງຈາກຊີວິດຂອງໂປໂລວ່າ ຄຼິດສະຕຽນມີຄວາມຄິດ ທີ່ເປັນປະໂຫຍດໃນການປະຕິບັດຊີວິດປະຈຳວັນຢ່າງໃດ? (ໃຫ້ຈົດ 3 ປະການໃນກ່ອງ 4 ຫຼ່ຽມນັ້ນ)

____________________________________________________________

____________________________________________________________

____________________________________________________________

____________________________________________________________

## ຢູ່ເກາະເມລິເຕ 3 ເດືອນ

(ກິດຈະການ 28:1-10)

**12** ກ. ຕະຫຼອດລະດູໜາວ ເຂົາຕ້ອງລໍຢູ່ໃສ? (ກຈກ 28:1) ________________________

ຂ. ຊາວເກາະນັ້ນຕ້ອນຮັບເຂົາຢ່າງໃດ? (ກຈກ 28:2) ________________________

ພົນລະເມືອງນັ້ນຕິດໃຈກັບໂປໂລ ເພາະເຫດສອງປະການ ຄື:

ຄ. ໂປໂລເອົາຟືນວາງໃສ່ໄຟ ມີຫຍັງມາຂົບມືໂປໂລ? (ກຈກ 28:3) ________________

ແຕ່ໂປໂລບໍ່ມີອັນຕະລາຍປະການໃດເລີຍ!

ງ. ຜູ້ໃຫຍ່ໃນເກາະນັ້ນທີ່ຕ້ອນຮັບເຂົາແລະລ້ຽງເຂົາໄວ້ 3 ວັນ. ຄົນນັ້ນຊື່ຫຍັງ? (ກຈກ 28:7) ________________________________________________

ຈ. ພໍ່ຂອງປົບລີໂອນັ້ນເປັນໄຂ້ແລະເປັນທ້ອງບິດ. ໂປໂລອ້ອນວອນແລ້ວວາງມືໃສ່ ແລ້ວເປັນຢ່າງໃດ? (ກຈກ 28:8) ________________________________________

ມີຫຼັກຖານຫຼາຍປະການທີ່ເຫັນວ່າໂປໂລຮັບພະພອນຈາກພະເຈົ້າຫຼາຍ, ຈົນກວ່າຜູ້ໃດກໍຢາກມາຫາໂປໂລ ເພາະເຂົາເຫັນ ແລະ ຮູ້ເລື່ອງຕ່າງ ໆ.

## ຊ່ວງສຸດທ້າຍມາເຖິງກຸງໂລມ

(ກິດຈະການ 28:11-30)

**13** ກ. ເຂົາຢູ່ເກາະເມລິເຕຈັກເດືອນ? (ກຈກ 28:11) ___________________________

ຂ. ລະດູໜາວກາຍໄປແລ້ວ ເຂົາລາຈາກເພື່ອນໃນເກາະເມລິເຕ ເດີນທາງໄປເຖິງເກາະສີຊີລີຄີ ເມືອງໃດ? (ກຈກ 28:12) ________________________________________

ຄ. ໝາຍໄວ້ໃນແຜນທີ່ໂດຍຕົວອັກສອນໃດ? ________________________________

ງ. ອີກ 3 ວັນ ເຂົາເດີນທາງຕໍ່ໄປເຖິງແຜ່ນດິນອີຕາເລຍເມືອງເລຄີໂອນ ຄືຕົວອັກສອນໃດ? __

ຈ. ຈາກນັ້ນວັນຖ້ວນສອງເຖິງເມືອງໃດ? (ກຈກ 28:13) ________________________

ສ. ໝາຍໄວ້ໂດຍອັກສອນໃດ? ________________________________________

**14** ກ. ມາເຖິງໂປເຕໂອລອຍ ເຫັນພີ່ນ້ອງຄຣິດສະຕຽນທີ່ໃຫ້ພັກຢູ່ນຳຈັກວັນ? (ກຈກ 28:14) ___

*ເຂົາຕ້ອນຮັບຢ່າງດີ ຕາມໃນ ໂລມ 12:13. ນາຍຮ້ອຍໂລມ ຄື ຢູລີໂອ ນັ້ນ, ເຫັນພີ່ນ້ອງຄຣິດສະຕຽນ ຕ້ອນຮັບໂປໂລຢ່າງນັ້ນ.*

*ກ່ອນຈະເຖິງກຸງໂລມ 65 ຫຼັກກິໂລແມັດ, ກໍຍິ່ງເຫັນພີ່ນ້ອງຄຣິດສະຕຽນມາຕ້ອນຮັບຫຼາຍ. ພີ່ນ້ອງເດີນທາງ ມາເຖິງຕະຫຼາດອາປີໂອ.*

ຂ. ຕະຫຼາດນັ້ນ ໝາຍໄວ້ໂດຍຕົວອັກສອນໃດ? ____________________________

ຄ. ພີ່ນ້ອງກຸ່ມທຳອິດເດີນທາງມາຕ້ອນຮັບໂປໂລຢູ່ຕະຫຼາດອາປີໂອ ແລ້ວຕໍ່ໄປອີກ 15 ຫຼັກກິໂລແມັດ ມີອີກຈຳພວກ ໜຶ່ງມາເຖິງສາລາໃດ? (ກຈກ 28:15) ________________

ງ. ໝາຍໄວ້ໂດຍຕົວອັກສອນໃດ? ______________________________________

*ກະວ່ານາຍຮ້ອຍຢູລີໂອ ບໍ່ເຄີຍເຫັນພີ່ນ້ອງຄຣິດສະຕຽນທີ່ເດີນທາງມາຕ້ອນຮັບຢ່າງນັ້ນຈັກເທື່ອ. ອາດຈະເຫັນແລະຮູ້ເລື່ອງຄວາມຮັກຂອງພະເຢຊູ.*

**15** ກ. ສຸດທ້າຍເຂົາເຂົ້າກຸງໃດ? (ກຈກ 28:16) ________________________________

ຂ. ໝາຍໂດຍຕົວອັກສອນໃດ? __________________________________________

ໂປໂລຕັ້ງໃຈໄວ້ຕັ້ງແຕ່ຫຼາຍປີວ່າຢາກມາປະກາດຂ່າວປະເສີດໃນກຸງໂລມ. ມາເຫັນແລ້ວແຕ່ຢູ່ໃນສະພາບ ເປັນນັກໂທດ!

*ຈົ່ງຮັບພິຈາລະນາ ແລະ ອ້ອນວອນ.*

*ພວກທະຫານໂລມເຫັນພີ່ນ້ອງຄຣິດສະຕຽນມາຕ້ອນຮັບໂປໂລຕັ້ງແຕ່ໄກ, ພີ່ນ້ອງເຫຼົ່ານັ້ນສະແດງຄວາມຮັກຂອງ ພະເຢຊູເພື່ອຊຶ່ງກັນແລະກັນ.*

*ພວກເຮົາຄວນຖືເອົາເຂົາເປັນຕົວຢ່າງ!*

ຕອບ:

**1** *ຢູລີໂອ.*

**2** *ກ. ອາລິດຕາໂຂ. ຂ. ເມືອງເທຊະໂລນິກແຂວງມາເກໂດເນຍ. ຄ. ສະແດງວ່າລູກາຢູ່ກັບເຂົາດ້ວຍ.*

**3** *ກ. ອັກສອນ (ບ). ຂ. ຊີໂດນ. ຄ. ອັກສອນ (ນ). ງ. ເຂົາບົວລະບັດໂປໂລ.*

**4** *ກ. ກຸບໂລ. ຂ. ອັກສອນ (ທ).*

**5** *ກ. ອັກສອນ (ຖ). ຂ. ໄປປະເທດອີຕາເລຍ. ຄ. ອັກສອນ (ຕ).*
*ງ. ກະເລເຕ. ຈ. ອັກສອນ (ຍ).*

**6** *ກ. ທ່າງາມ. ຂ. ອັກສອນ (ດ). ຄ. ບໍ່ເໝາະສົມພໍກັບການຈອດ.*
*ງ. ໂປໂລ. ຈ. ເທດສະການອົດອາຫານ. ສ. ອັນຕະລາຍ.*

**7** *ກ. ລົມຕາເວັນອອກສຽງເໜືອ. ຂ. ປ່ອຍໄປຕາມລົມ.*
*ຄ. ແສງຕາເວັນແລະແສງດາວ. ງ. ເກາະກະເລເຕ. ຈ. ເທວະດາຂອງພະເຈົ້າ.*

**8** *ກ.14 ຄືນ. ຂ. ພວກລູກເຮືອ. ຄ. ນາຍຮ້ອຍແລະພວກທະຫານ.*
*ງ. ຕັດເຊືອກທີ່ຜູກເຮືອນ້ອຍໃຫ້ຕົກນໍ້າ.*

ຕອບ (ຕໍ່):

**9** *ກ.14 ວັນ. ຂ. ຮັກສາຊີວິດໃຫ້ພົ້ນ. ຄ. ເຊົ້າຈີ່. ງ. ຂອບຄຸນພະເຈົ້າ.*

**10** *ກ. ຄອນບ່ອນໜຶ່ງ. ຂ. ທະຫານ. ຄ. ຂ້ານັກໂທດ. ງ. ເມລີເຕ.*

**11** *(ແລ້ວແຕ່ທ່ານຈະຍົກເອົາຄວາມຈາກກ່ອງ 4 ຫຼ່ຽມ).*

**12** *ກ. ເກາະເມລີເຕ. ຂ. ເຂົາດັງໄຟຕ້ອນຮັບ. ຄ. ງູພິດ. ງ. ປົບລີໂອ.*
*ຈ. ດີພະຍາດ.*

**13** *ກ. ສາມເດືອນ. ຂ. ຊີລະຄູຊາຍ. ຄ. ອັກສອນ (ຈ). ງ. ອັກສອນ (ສ).*
*ຈ. ໂປຕີໂອລອຍ. ສ. ອັກສອນ (ງ)*

**14** *ກ.7 ວັນ. ຂ. ອັກສອນ (ຄ). ຄ. ສາລາສາມຫຼັງ. ງ. ອັກສອນ (ຂ).*

**15** *ກ. ກຸງໂລມ. ຂ. ອັກສອນ (ກ).*

### ໃນການປະຊຸມບົດທີ 6

## ໂປໂລຂຽນເລື່ອງຄວາມສຸກໃນພະທຳຟີລິບປອຍ

*ໂປໂລມາເຖິງກຸງໂລມ ແຕ່ວ່າລູກາບໍ່ໄດ້ລາຍງານຕໍ່, ແຕ່ໃນພະທຳຟີລິບປອຍນີ້ເຫັນວ່າໂປໂລຍັງ ມີຄວາມສຸກຢູ່. ເຖິງຈະຖືກຂັງໄວ້ກໍຕາມ, ແຕ່ເພິ່ນບໍ່ເສົ້າໃຈ.*

**1** ໂປໂລທີ່ບໍ່ເຄີຍຢຸດພັກໃນການຮັບໃຊ້ພະເຈົ້າ ຖືກຂັງໄວ້ແລ້ວ, ບາງຄົນອາດຈະເສົ້າໃຈ ອາດຈະໝົດຫວັງທີ່ຈະອອກໄປ ປະກາດ. ແຕ່ໂປໂລບໍ່ເປັນຢ່າງນັ້ນ, ໃຫ້ອ່ານໃນ ຟີລິບປອຍ 2:17-18 ໂປໂລຄິດວ່າອາດຈະຕາຍ ແຕ່ຍັງ ມີທ່າທີຢ່າງໃດ? ____________________

_______________________________________________________________

_______________________________________________________________

## ຖືກຄວາມລຳບາກກໍຕາມ ແຕ່ຍັງມີຄວາມສຸກ

**2** ເບິ່ງດູ! ເຖິງໂປໂລຖືກຂັງໄວ້ກໍຕາມ ແຕ່ຍັງມີຄວາມສຸກ.

ກ. ໃນ ຟລປ 1:5 ທຸກເທື່ອທີ່ໂປໂລອ້ອນວອນເພື່ອເຂົາ ເພິ່ນທູນຂໍດ້ວຍໃຈຢ່າງໃດ? _____

ຂ. ໃນ ຟລປ 1:15-18 ໂປໂລເຫັນວ່າບາງຄົນປະກາດເລື່ອງພະຄຼິດດ້ວຍມີໃຈອິດສາ ແຕ່ມີຄົນອື່ນທີ່ປະກາດດ້ວຍມີ ໃຈຫວັງດີ. ຈະເປັນດ້ວຍການທຳທ່າເຮັດຫຼືຈິງໃຈເຮັດກໍດີ, ແຕ່ເຂົາຍັງປະກາດເລື່ອງພະຄຼິດ ດັ່ງນັ້ນໂປໂລມີຄວາມຮູ້ສຶກແບບໃດ? (ຂໍ້ 18) _____________

ຄ. ໃນ ຟລປ 1:19 ໂປໂລສະແດງຄວາມຍິນດີໃນການອ້ອນວອນແລະການຊ່ວຍເຫຼືອຈາກເຂົາ ຈະເປັນເຫດໃຫ້ ເຖິງຫຍັງ? ____________________________________

ງ. ໃນ ຟລປ 1:23-25 ໂປໂລຢາກໄປຢູ່ກັບພະເຍຊູ ແຕ່ເພິ່ນຕ້ອງຍອມຢູ່ໃນໂລກນີ້ກ່ອນ. ເພື່ອໃຫ້ພວກພີ່ນ້ອງຄຼິດສະຕຽນ ຈະເລີນຂຶ້ນ ແລະຊົມຊື່ນ ____________________ ໃນຄວາມເຊື່ອ. (ຕື່ມຄວາມທີ່ຂາດ)

ຈ. ໃນ ຟລປ 2:2 ພີ່ນ້ອງໃນຄຼິດສະຕະຈັກຟີລິບປອຍ ມີຄວາມຄິດຢ່າງດຽວກັນ ມີຄວາມຮັກຢ່າງດຽວກັນ ມີໃຈຮ່ວມ ສາມັກຄີເປັນນ້ຳໜຶ່ງໃຈດຽວກັນ ເຮັດໃຫ້ໂປໂລມີຫຍັງຢ່າງຄົບເຕັມ? ____________________________________________

ສ. ໃນ ຟລປ 2:17-18 ໂປໂລອາດຈະສະລະຊີວິດເປັນເຄື່ອງບູຊາ ໂປໂລກໍ __________ ທັງພີ່ນ້ອງກໍຄວນ ຈະ _________ ດ້ວຍ. (ຕື່ມຄວາມທີ່ຂາດ)

ຊ. ໃນ ຟລປ 4:1 ແມ່ນພວກໃດທີ່ເຮັດໃຫ້ໂປໂລຍິນດີ? ________________________

ຍ. ໃນ ຟລປ 4:10 ໂປໂລມີໃຈຢ່າງໃດ ທີ່ພວກເຂົາເປັນຫ່ວງແລະລະນຶກເຖິງ? _________

> ໃຫ້ຂຽນຄຳວ່າ "ຍິນດີ" ໃສ່ຂອບເຈ້ຍຂ້າງທຸກຂໍ້ເຫຼົ່ານັ້ນ ຄື:
> ຟີລິບປອຍ 1:5 1:18 1:25 2:2 2:17 4:1 4:10.

**3** ເຖິງຈະຍາກລຳບາກປານໃດກໍຕາມ ແຕ່ໂປໂລຍັງມີຄວາມຊື່ນຊົມຍິນດີ ຈຶ່ງຈະຊັກຊວນໃຫ້ພີ່ນ້ອງມີຄວາມຊື່ນຊົມຍິນດີດ້ວຍ. ເຖິງວ່າການຢູ່ການກິນໃນສະພາບຍາກລຳບາກກໍຕາມ ແຕ່



(1)



(2)

ເພິ່ນມີຄວາມຊື່ນຊົມຍິນດີໃນໃຜ? (ຟລປ 3:1 ແລະ 4:4) ________________________

**4** ໂປໂລເອົາພະເຍຊູເປັນຕົວຢ່າງໃນການທົນທຸກລຳບາກ ແລະໂປໂລກໍເປັນຕົວຢ່າງຕໍ່ພີ່ນ້ອງໃນຄຣິດສະຕະຈັກຟີລິບປອຍ ອີກ. ຄວາມຈິງພະເຍຊູເປັນບໍ່ເກີດແຫ່ງຄວາມຍິນດີນັ້ນ ແຕ່ພວກພີ່ນ້ອງໃນຄຣິດສະຕະຈັກຟີລິບປອຍບໍ່ໄດ້ເຫັນພະເຍຊູກັບຕາ ຢ່າງທີ່ເຫັນໂປໂລ ດັ່ງນັ້ນຕົວຢ່າງທີ່ເຂົາເຫັນນັ້ນ ຄື ໂປໂລ.

ກ. ຮູບໃດສະແດງເຖິງຄວາມລຳບາກຂອງພະເຍຊູ? ____________________________

ຂ. ຮູບໃດສະແດງເຖິງຄວາມລຳບາກຂອງໂປໂລ? ____________________________

ຄ. ທ່ານເອງເຄີຍຖືກຂົ່ມເຫັງຢ່າງໃດ? ______________________________________

______________________________________________________________

ງ. ຄຣິດສະຕຽນໃນປະເທດຕ່າງ ໆ ເປັນແນວໃດ? _______________________________

______________________________________________________________

**5** ໃນການຮັບມໍລະດົກຮ່ວມກັບພະຄຣິດ ເຮົາຈະຮັບຮ່ວມກັບພະອົງໃນສອງດ້ານໃດ? (ໂລມ 8:17)

ກ. ________________________________________

ຂ. ________________________________________

**6** ໃຫ້ເປີດອ່ານ ຟີລິບປອຍ 2:5-11.

ກ. ພວກເຮົາຈຶ່ງມີນ້ຳໃຈຕໍ່ກັນແລະກັນເໝືອນຢ່າງທີ່ມີໃນໃຜ? ___________________

ຂ. ພະອົງຊົງສະພາບຂອງໃຜ? ____________________________________________

ຄ. ພະອົງຍອມສະລະສະພາບຂອງພະເຈົ້າແລະຊົງຮັບສະພາບໃດແທນ? _____________

ງ. ປາກົດໃນສະພາບມະນຸດແລ້ວ ພະອົງຊົງເຮັດຫຍັງ? (ຂໍ້ 8) ___________________

ຈ. ຍອມເຊື່ອຟັງຈົນເຖິງຫຍັງ? ____________________________________________

ສ. ພະເຈົ້າຍົກພະອົງເຖິງໃສ? ____________________________________________

ຊ. ພະເຈົ້າຊົງປະທານພະນາມຢ່າງໃດ? ______________________________________

ຍ. ເພື່ອທຸກຫົວເຂົ່າຈະເຮັດຢ່າງໃດ? ________________________________________

ດ. ທຸກລີ້ນຈະຍອມຮັບຫຍັງ? _____________________________________________

**7** ໃຫ້ທ່ານສັງເກດວ່າ ຂໍ້ພະຄຳພີ (ຟລປ 2:5-11) ເຫຼົ່ານັ້ນ ທີ່ພິມໃນພະຄຳພີ ຄ້າຍຄືວ່າເປັນຄຳກອນເໝືອນຢ່າງເພງສັນລະເສີນ.

ກ. ຂໍ້ໃດກ່າວເຖິງສະພາບຂອງພະເຈົ້າ? _______________

ຂ. ຂໍ້ໃດກ່າວເຖິງສະພາບຂອງຂ້ອຍຂ້າ? _______________

ຄ. ຂໍ້ໃດກ່າວເຖິງໄມ້ກາງແຂນ? ____________________

ງ. ຂໍ້ໃດກ່າວເຖິງພະນາມທີ່ເໜືອນາມທັງປວງ? __________

ຈ. ຂໍ້ໃດກ່າວເລື່ອງການຂາບໄຫວ້ພະອົງ? ______________

ສ. ຂໍ້ໃດກ່າວເຖິງການຮັບວ່າເປັນພະຜູ້ເປັນເຈົ້າ? _________





**8** ໃຫ້ອ່ານ ຟີລິບປອຍ 2:14-16.

ກ. ພວກເຮົາຈະຮ່ວມກັບພະອົງໂດຍບໍ່ມີການຫຍັງ?
(ຂໍ້ 14) ______________________________________________________

ຂ. ຈະຮ່ວມກັບພະອົງໃນການບໍ່ມີຕຳໜິຖ້າມກາງເຊື້ອຊາດຢ່າງໃດ?
(ຂໍ້ 15) ______________________________________________________

ຄ. ຈະສະແດງຫຍັງ?
(ຂໍ້ 16) ______________________________________________________

**9** ພວກເຮົາຢູ່ໃນໂລກທີ່ເຕັມໄປດ້ວຍຄົນຄິດໂກງແລະຊົ່ວຊ້າ, ດັ່ງນັ້ນເຮົາຈະພົບການລຳບາກແນ່ນອນ. ບາງເທື່ອ ໂປໂລຍົກສິດທິຂອງການເປັນພົນລະເມືອງໂລມ ແຕ່ພວກເຮົາທີ່ເປັນຄຣິດສະຕຽນທຸກຄົນມີສິດທີ່ໃຫຍ່ກ່ວານັ້ນອີກ. (ຟລປ 3:20-21)

ກ. ພວກເຮົາເປັນພົນລະເມືອງໃດ? ______________________________

ຂ. ເຮົາລໍຄອຍໃຜຈະມາ? __________________________________

ຄ. ພະອົງຈະປ່ຽນແປງຮ່າງກາຍອັນຕ່ຳຕ້ອຍຂອງພວກເຮົາໃຫ້ເປັນເໝືອນຫຍັງ?

_______________________________________________________

**10** ບາງເທື່ອພວກເຮົາອາດຈະສຳນຶກຕົວວ່າ ບໍ່ເປັນຄຣິດສະຕຽນສົມບູນປານໃດ ເພາະເຮົານຶກເຖິງບາບທີ່ເຄີຍເຮັດມາກ່ອນ ຈຶ່ງເຮັດໃຫ້ບໍ່ມີຄວາມສຸກ. ໃຫ້ອ່ານໃນ ຟລປ 3:12-15.

ກ. ໂປໂລຕັ້ງໃຈວ່າຈະລືມຫຍັງ? _________________________________

ຂ. ແລ້ວໂນ້ມຕົວອອກໄປຫາສິ່ງໃດ? _____________________________

*ນັກກິລາທີ່ຈະແລ່ນແຂ່ງກັນຕ້ອງເບິ່ງແຕ່ເສັ້ນໄຊທີ່ຢູ່ຂ້າງໜ້າ. ຖ້າຫັນໜ້າເບິ່ງແຕ່ຂ້າງຫຼັງ ຈະບໍ່ຊະນະ. ຢ່າງດຽວກັນກັບຄຣິດສະຕຽນຄວນຄິດເຖິງແຕ່ປາຍທາງ.*



**11** ໃຫ້ອ່ານ ເຮັບເລີ 12:2 ແລ້ວອ່ານອີກໃນ ໂຢຮັນ 16:20-22 ພະເຢຊູລາຈາກພວກສາວົກກ່ອນ ຈະຕາຍທີ່ ໄມ້ກາງແຂນ. ພວກເຮົາອາດຈະຖືກການຂົ່ມເຫັງຫຼືອາດຈະພົບການຍາກລຳບາກ ທີ່ ຈະເຮັດໃຫ້ເສົ້າໃຈ. ອາດຈະ ມີບັນຫາໃນຄອບຄົວ ອາດຈະມີການເຈັບໄຂ້ ຫຼື ຢ່າງອື່ນ ໆ. "ຈົ່ງປັກຕາເບິ່ງພະເຢຊູ" ທ່ານເຄີຍມີປະຊົບການ ອັນໃດໃນເລື່ອງນີ້ ທີ່ຈະກ່າວໃຫ້ໝູ່ໃນທີ່ ປະຊຸມຟັງບໍ່? (ໃຫ້ຈົດໄວ້) ____________________________________________

____________________________________________________________

____________________________________________________________

____________________________________________________________

*ພະເຢຊູບອກວ່າ: ຈົ່ງຂໍແລ້ວພວກທ່ານຈະໄດ້ຮັບ.*
*ເພື່ອຄວາມຍິນດີຂອງພວກທ່ານຈະເຕັມບໍລິບູນ ໂຢຮັນ 16:24.*
*ໃຫ້ຮ່ວມກັນອ້ອນວອນຕໍ່ພະເຈົ້າຕາມຄຳສັນຍານັ້ນ.*

ໃຫ້ຕອບບົດເສັງແລ້ວເຮັດການບ້ານຕາມເຄີຍ

ຕອບ:

**1** *(ໃຫ້ແລກປ່ຽນຄຳຕອບໃນທີ່ປະຊຸມ... ເຖິງອາດຈະຕາຍກໍຕາມ ແຕ່ຍັງມີຄວາມຍິນດີ).*

**2** *ກ. ໃຈຍິນດີ. ຂ. ມີຄວາມຍິນດີ. ຄ. ການປົດປ່ອຍ (ຂອງໂປໂລ).*
*ງ. ຍິນດີ. ຈ. ຄວາມຍິນດີ. ສ. ຍິນດີ... ຍິນດີ. ຊ. ພີ່ນ້ອງ. ຍ. ມີໃຈຊົມຊື່ນຍິນດີ.*

**3** *ໃນອົງພະຜູ້ເປັນເຈົ້າ.*

**4** *ກ. ຮູບ 2. ຂ. ຮູບ 1. ຄ. (ໃຫ້ແລກປ່ຽນຄຳຕອບໃນທີ່ປະຊຸມ).*
*ງ. (ໃຫ້ແລກປ່ຽນຄຳຕອບໃນທີ່ປະຊຸມ).*

**5** *ກ. ທົນທຸກທໍລະມານ. ຂ. ສະຫງ່າລາສີ.*

**6** *ກ. ໃນພະເຢຊູຄຼິດ. ຂ. ຂອງພະເຈົ້າ. ຄ. ຂ້ອຍຂ້າ. ງ. ຖ່ອມຕົວລົງ.*
*ຈ. ຄວາມມໍລະນາທີ່ໄມ້ກາງແຂນ. ສ. ເຖິງທີ່ສູງສຸດ. ຊ. ຊື່ງຢູ່ເໜືອນາມທັງປວງ.*
*ຍ. ຈະຄູລົງຂາບພະເຢຊູ. ດ. ຮັບວ່າ "ພະເຢຊູຄຼິດຊົງເປັນອົງພະຜູ້ເປັນເຈົ້າ".*

**7** *ກ. ຂໍ້ (6). ຂ. ຂໍ້ (7). ຄ. ຂໍ້ (8). ງ. ຂໍ້ (9). ຈ. ຂໍ້ (10). ສ. ຂໍ້ (11)*

**8** *ກ. ໂດຍບໍ່ມີການຈົ່ມແລະຖົກຖຽງກັນ. ຂ. ເຊື້ອຊາດອັນຄົດໂກງແລະຊົ່ວຊ້າ.*
*ຄ. ພະທຳອັນປະກອບດ້ວຍຊີວິດ.*

**9** *ກ. ພົນລະເມືອງສະຫວັນ. ຂ. ພະຜູ້ໂຜດໃຫ້ພົ້ນ.*
*ຄ. ເໝືອນພະກາຍອັນສະຫງ່າລາສີຂອງພະອົງ.*

**10** *ກ. ລືມສິ່ງທີ່ຜ່ານພົ້ນໄປ. ຂ. ສິ່ງທີ່ຢູ່ຂ້າງໜ້າ.*

**11** *(ບໍ່ມີຄຳຕອບທີ່ຖືກຕາຍຕົວ ໃຫ້ພິຈາລະນາເບິ່ງ).*